**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງສະຫວັນນະເຂດ

ເລກທີ 0306/ ຈຂ.ສຂ

ສະຫວັນນະເຂດ, ລົງວັນທີ 5 ກຸມພາ 2018

# ຄໍາສັ່ງ
## ຂອງເຈົ້າແຂວງສະຫວັນນະເຂດ
## ກ່ຽວກັບການເພີ່ມທະວີຄຸ້ມຄອງວຽກງານອາຊີບ-ພາຫະນະພິເສດ

**ເຖິງ** : ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ-ປກສ ແຂວງ, ອົງການປົກຄອງເມືອງ, ອົງການປົກຄອງບ້ານ, ຫົວໜ່ວຍທຸລະກິດ, ຜູ້ປະກອບການ ທົ່ວແຂວງສະຫວັນນະເຂດ.

- ອີງຕາມ ກົດໝາຍວ່າດ້ວຍການປົກຄອງທ້ອງຖິ່ນ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 68/ສພຊ, ລົງວັນທີ 14 ທັນວາ 2015 ພາກທີ III ໝວດທີ 4 ມາດຕາ 20 ຂໍ້ທີ 13.
- ອີງຕາມ ກົດໝາຍວ່າດ້ວຍວິສາຫະກິດ ( ສະບັບປັບປຸງ ) ເລກທີ 46/ສພຊ, ລົງວັນທີ 26 ທັນວາ 2013.
- ອີງຕາມ ຄໍາສັ່ງສະບັບເລກທີ 27 /ນຍ, ລົງວັນທີ 05 ຕຸລາ 2011 ຂອງນາຍົກລັດຖະມົນຕີ ວ່າດ້ວຍການເພີ່ມທະວີວຽກງານສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ໃນສັງຄົມ.
- ອີງຕາມ ຂໍ້ຕົກລົງເລກທີ 653/ປກສ, ລົງວັນທີ 08 ພຶດສະພາ 2012 ຂອງລັດຖະມົນຕີ ກະຊວງປ້ອງກັນຄວາມສະຫງົບ ວ່າດ້ວຍການຄຸ້ມຄອງວຽກງານອາຊີບ-ພາຫະນະພິເສດ.
- ອີງຕາມ ມະຕິຂອງກອງປະຊຸມຄະນະປະຈໍາສະພາປະຊາຊົນແຂວງ ສະບັບເລກທີ 11 / ຄປຈຂ, ລົງວັນທີ 05 02 / 2018.

ປັດຈຸບັນ ເຫັນວ່າສະພາບປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນສັງຄົມ ມີຫຼາຍເຫດການທີ່ມີທ່າອ່ຽງເພີ່ມຂຶ້ນ, ມີຜົນກະທົບຢູ່ຫຼາຍຂົງເຂດ ແລະ ມີລັກສະນະກວ້າງຂວາງ ເປັນຕົ້ນແມ່ນ ບັນຫາຢາເສບຕິດ, ປຸ້ນຊັບ, ຊີງຊັບ, ລັກຊັບ, ການນໍາໃຊ້ອາວຸດໂດຍບໍ່ຖືກຕ້ອງ, ສະຖານທີ່ມົ້ວສຸມ, ໄພສັງຄົມ, ການຄ້າມະນຸດ, ຂາຍປະເວນີ ທັງຄົນພາຍໃນ ແລະ ຄົນຕ່າງປະເທດທີ່ບໍ່ຖືກຕ້ອງຕາມລະບຽບການ ແລະ ກົດໝາຍແຫ່ງ ສປປ ລາວ ກໍານົດໄວ້. ຜ່ານມາພວກເຮົາກໍ່ໄດ້ສຸມໃສ່ຄຸ້ມຄອງ ແລະ ມີມາດຕະການແກ້ໄຂດ້ວຍຫຼາຍຮູບແບບ ແລະ ຫຼາຍວິທີຢ່າງຕັ້ງໜ້າ. ໂດຍທັນເປັນຄໍາສັ່ງ, ຂໍ້ຕົກລົງຂອງອົງການປົກຄອງທ້ອງຖິ່ນ ເພື່ອຄຸ້ມຄອງ ແລະ ກວດກາ ຕໍ່ວຽກງານດັ່ງກ່າວ. ແຕ່ເຫັນວ່າຍັງມີຫຼາຍໆ ເຫດການ, ປະກົດການເກີດຂຶ້ນໃນສັງຄົມ ທີ່ສົ່ງຜົນກະທົບເຖິງຄວາມບໍ່ສະຫງົບ, ຄວາມບໍ່ເປັນລະບຽບຮຽບຮ້ອຍໃນສັງຄົມ, ກົດໜ່ວງຖ່ວງດຶງ ການພັດທະນາເສດຖະກິດ-ສັງຄົມຂອງຊາດ ແລະ ທ້ອງຖິ່ນບໍ່ໜ້ອຍ ເຊິ່ງສົ່ງຜົນກະທົບຕໍ່ບົດບາດ ແລະ ອິດທິພົນການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດ ໂດຍສະເພາະຕໍ່ພາລະບົດບາດ, ສິດ ແລະ ໜ້າທີ່ໃນການຄຸ້ມຄອງ, ກວດກາ ທີ່ມີຄວາມສ່ຽງຕໍ່ຄວາມບໍ່ສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ທີ່ເປັນເງື່ອນໄຂໃຫ້

ອິດທິກຳລັງປໍລະປັກ ແລະ ກຸ່ມຄົນບໍ່ດີ ນຳເອົາບັນຫາດັ່ງກ່າວ ສວຍໃຊ້ສ້າງສະຖານະການ ທາງດ້ານການເມືອງ, ໂຄສະນາບິດເບືອນ ໄປໃນທາງທີ່ບໍ່ດີຕໍ່ການນຳພາຂອງພັກ ແລະ ການຄຸ້ມຄອງລັດ-ຄຸ້ມຄອງສັງຄົມ.

ເພື່ອເຮັດໃຫ້ຜູ້ປະກອບກິດຈະການກ່ຽວກັບອາຊີບ-ພາຫະນະພິເສດ ຂອງບຸກຄົນ ຫຼື ນິຕິບຸກຄົນ, ອົງການຈັດຕັ້ງຂອງລັດ, ເອກະຊົນ ນັບທັງຄົນລາວ, ຄົນຕ່າງດ້າວ ແລະ ຊາວຕ່າງປະເທດ ທີ່ຢູ່ພາຍໃນແຂວງສະຫວັນນະເຂດ ໃຫ້ປະຕິບັດຖືກຕ້ອງ ຕາມລະບຽບກົດໝາຍ.

## ເຈົ້າແຂວງສະຫວັນນະເຂດ ອອກຄຳສັ່ງ:

1. ໃຫ້ບັນດາພະແນກການ, ອົງການທຽບເທົ່າ, ກອງບັນຊາການ ປກຊ - ປກສ, ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງເມືອງ, ອົງການປົກຄອງບ້ານເປັນເຈົ້າການຄົ້ນຄວ້າ ແລະ ກຳແໜ້ນເນື້ອໃນວຽກງານຄຸ້ມຄອງອາຊີບ-ພາຫະນະພິເສດ. ເລີ່ມຈາກການໂຄສະນາເຜີຍແຜ່ຄຳສັ່ງ, ຂໍ້ຕົກລົງ ແລະ ບັນດາກົດໝາຍກ່ຽວຂ້ອງ ເພື່ອປຸກຈິດສຳນຶກ, ສ້າງສະຕິເຄົາລົບ ແລະ ປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍຂອງອົງການປົກຄອງແຂວງ ວາງອອກໃຫ້ພະນັກງານ, ທະຫານ-ຕຳຫຼວດ ຢູ່ສຳນັກງານອົງການ, ໂຮງຮຽນ, ໂຮງໝໍ ແລະ ຫົວໜ່ວຍທຸລະກິດ, ຜູ້ປະກອບການ, ຕະຫຼອດຮອດອຳນາດການປົກຄອງບ້ານ ແລະ ປະຊາຊົນບັນດາເຜົ່າຢ່າງທົ່ວເຖິງ ເພື່ອໃຫ້ທຸກຄົນ, ທຸກພາກສ່ວນປະກອບສ່ວນ ແລະ ມີສ່ວນຮ່ວມເຮັດວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ.

2. ຄະນະນຳ ຢູ່ແຕ່ລະພະແນກການຂັ້ນແຂວງ, ເມືອງ ແລະ ອຳນາດການປົກຄອງບ້ານຕ້ອງເອົາໃຈໃສ່ຊີ້ນຳ ຢ່າງໃກ້ສິດຕິດແທດ ດ້ວຍຄວາມຮັບຜິດຊອບສູງ ແລະ ມີການຄຸ້ມຄອງ, ຕິດຕາມກວດກາ ເພື່ອຮັບປະກັນຄວາມສັດຊື່ບໍລິສຸດຂອງພະນັກງານ, ເຈົ້າໜ້າທີ່, ເລົ່າຮົບວິຊາສະເພາະຂອງຕົນ, ທັງມີການປະສານສົມທົບ ແລະ ຮ່ວມມືລະຫວ່າງຂະແໜງການ, ອົງການ ກັບກອງບັນຊາການປ້ອງກັນຄວາມສະຫງົບ ຂັ້ນແຂວງ, ຂັ້ນເມືອງ ຢ່າງກົມກຽວໃນການກວດກາ ແລະ ຄຸ້ມຄອງວຽກງານອາຊີບ-ພາຫະນະພິເສດ ຢູ່ກົມກອງ, ທ້ອງຖິ່ນຂອງຕົນ ໃຫ້ມີປະສິດທິຜົນສູງ ແລະ ເຂັ້ມງວດ.

3. ກຳນົດເປົ້າໝາຍການຄຸ້ມຄອງວຽກງານອາຊີບ-ພາຫະນະພິເສດ.

3.1. ເປົ້າໝາຍການຄຸ້ມຄອງວຽກງານອາຊີບພິເສດ ມີດັ່ງນີ້:

- ຮ້ານສ່ຽນ ແລະ ສ້ອມແປງກະແຈທຸກປະເພດ.
- ຮ້ານສ້ອມແປງອາວຸດປືນ.
- ຮ້ານຜະລິດກາປະທັບທຸກປະເພດ.
- ຮ້ານຜະລິດຊື້ - ຂາຍຂອງແຫຼມ ແລະ ເຄື່ອງມີຄົມປະເພດຕ່າງໆ.
- ຮ້ານຊື້ - ຂາຍອາວຸດປ້ອງກັນຕົວ ປະເພດຕ່າງໆ (ນອກຈາກອາວຸດປືນເສິກ).
- ຮ້ານຊື້ - ຂາຍທາດລະເບີດ ແລະ ທາດແຕກ ປະເພດຕ່າງໆ.
- ຮ້ານຊື້ - ຂາຍວັດຖຸເຄມີ, ສານພິດຕ່າງໆ.
- ກາຊີໂນ - ການພະນັນ ປະເພດຕ່າງໆ.
- ໂຮງແຮມ, ເຮືອນພັກ, ເຮືອນໃຫ້ເຊົ່າ, ຫ້ອງແຖວ, ຣີສອດ ແລະ ຮ້ານອາຫານກິນດື່ມ, ບັນເທີງ-ຄາຣາໂອເກະ.
- ຮ້ານອາບ - ອົບ - ນວດ, ສັບຍະກຳ ແປງເພດຕ່າງໆ.
- ຮ້ານສ້ອມແປງພາຫະນະ (ດັດແປງພາຫະນະ).
- ໂຮງຮັບຈຳນຳ - ຊວດຈຳ.

3.2. ເປົ້າໝາຍການຄຸ້ມຄອງວຽກງານພາຫະນະພິເສດ ມີດັ່ງນີ້:

- ເຄື່ອງຈັກສ່ຽນ - ລູກກະແຈທຸກປະເພດ.
- ເຄື່ອງສ່ຽນເລົາປືນ - ແມ່ແຮງ.
- ເຄື່ອງຜະລິດກາປະທັບ, ໜ່ວຍກາປະທັບທຸກປະເພດ.
- ອາວຸດປ້ອງກັນຕົວປະເພດຕ່າງໆ (ຍົກເວັ້ນອາວຸດເສິກ).
- ວັດຖຸແຫຼມ - ຄົມ, ເຄື່ອງຊັອດໄຟຟ້າ ປະເພດຕ່າງໆ.
- ປະເພດສານເຄມີ, ທາດລະເບີດ, ຜະລິດຕະພັນສຳເລັດຮູບເຄມີ, ສານພິດ, ທາດເບື່ອປະເພດຕ່າງໆ.
- ເຄື່ອງມືປະກອບຫຼິ້ນກາຊິໂນ ແລະ ການພະນັນຕ່າງໆ.
- ບຸກຄົນບໍລິການອາບ - ອົບ - ນວດ.
- ຮ່າງເອກະສານສັນຍາ ຊວດ-ຈຳ ທີ່ຈຳເປັນ.
- ພາຫະນະທີ່ຖືກດັດແປງ.

4. ຂັ້ນຕອນກ່ອນການອະນຸຍາດ ຈົດທະບຽນອາຊີບ-ພາຫະນະພິເສດ.

ບຸກຄົນ, ນິຕິບຸກຄົນ ແລະ ບັນດາອົງການຈັດຕັ້ງຕ່າງໆ ທີ່ຕ້ອງການປະກອບອາຊີບ, ດຳເນີນທຸລະກິດກ່ຽວກັບບໍລິການໂຮງແຮມ, ເຮືອນພັກ, ເຮືອນໃຫ້ເຊົ່າ, ຫ້ອງແຖວ, ຣີສອດ, ຮ້ານອາຫານກິນດື່ມ, ຮ້ານບັນເທີງ-ຄາຣາໂອເກະ, ຮ້ານບໍລິການອາບ - ອົບ - ນວດ, ສັນຍາກຳແປງເພດ, ຮ້ານສ້ອມແປງພາຫະນະ ( ດັດແປງພາຫະນະ), ຮ້ານຊ່ຽນ - ສ້ອມແປງກະແຈ, ໂຮງຮັບຈຳນຳ - ຊວດຈຳ, ກະຊິໂນ-ການພະນັນ, ຮ້ານຜະລິດຊື້-ຂາຍຂອງແຫຼມ-ຄົມ, ຮ້ານຊື້-ຂາຍທາດລະເບີດ, ທາດແຕກ,ວັດຖຸເຄມີ, ສານພິດຕ່າງໆ ທີ່ນອນຢູ່ໃນວຽກງານອາຊີບ-ພາຫະນະພິເສດ ກ່ອນໄດ້ຮັບອະນຸຍາດການຈົດທະບຽນ ຈາກຂະແໜງການກ່ຽວຂ້ອງ ຕ້ອງໄດ້ປະກອບເອກະສານໜັງສືສະເໜີ ຜ່ານອຳນາດການປົກຄອງບ້ານ, ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ, ປກສ ເມືອງ ບ່ອນທີ່ຈະດຳເນີນທຸລະກິດ ເພື່ອນຳສະເໜີກອງບັນຊາການ ປກສ ແຂວງ ຄົ້ນຄວ້າ, ກວດກາຢັ້ງຢືນຄວາມຖືກຕ້ອງ.

ພາຍຫຼັງທີ່ໄດ້ຮັບການກວດກາ ຢັ້ງຢືນ ຈາກເຈົ້າໜ້າທີ່ຕຳຫຼວດແລ້ວ ຕ້ອງໄດ້ປະກອບເອກະສານ ແຈ້ງຂຶ້ນທະບຽນດຳເນີນທຸລະກິດ ຕາມລະບຽບ ແລະ ກົດໝາຍ ເພື່ອໃຫ້ອົງການກ່ຽວຂ້ອງອອກໃບອະນຸຍາດ ດຳເນີນທຸລະກິດຢ່າງຖືກຕ້ອງ.

ສຳລັບປະເພດອາຊີບ-ພາຫະນະພິເສດ ທີ່ໄດ້ຮັບອະນຸຍາດສ້າງຕັ້ງ ແລະ ດຳເນີນກິດຈະການມາກ່ອນ ການອອກຄຳສັ່ງສະບັບນີ້ ຕ້ອງໄດ້ມາແຈ້ງຂຶ້ນທະບຽນ ຈາກເຈົ້າໜ້າທີ່ ປກສ ແຂວງ, ປກສ ເມືອງ ໂດຍຜ່ານອຳນາດການປົກຄອງແລະ ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ ຕາມຂັ້ນຕອນທີ່ກຳນົດໄວ້ໃນຄຳສັ່ງສະບັບນີ້ ພາຍໃນກຳນົດ 30 ວັນ.

5. ລະບຽບການຄຸ້ມຄອງ, ກວດກາ ອາຊີບ-ພາຫະນະພິເສດ.

5.1. ການບໍລິການພັກເຊົາ.

ບຸກຄົນ ຫຼື ນິຕິບຸກຄົນ ແລະ ອົງການຈັດຕັ້ງ ທີ່ໄດ້ດຳເນີນປະກອບອາຊີບ ທຸລະກິດບໍລິການພັກເຊົາ ເຊັ່ນ : ໂຮງແຮມ, ເຮືອນພັກ, ຣີສອດ ແລະ ເຮືອນໃຫ້ເຊົ່າ. ໃນກໍລະນີມີແຂກເຂົ້າມາພັກເຊົາໃນແຕ່ລະຄັ້ງ ຕ້ອງໄດ້ສ້າງປື້ມບັນທຶກຕິດຕາມ, ຈົດຊື່ ແລະ ນາມສະກຸນ, ເລກບັດປະຈຳຕົວ, ບ່ອນອອກບັດປະຈຳຕົວ, ວັນ-ເດືອນ-ປີ ເຂົ້າ-ອອກຂອງການພັກເຊົາ, ສຳລັບຄົນຕ່າງປະເທດ ຕ້ອງໄດ້ຈົດເລກໜັງສືຜ່ານແດນ (PASSPORT) ພ້ອມທັງສະຫຼຸບໜຶ່ງອາທິດ-ຕໍ່ຄັ້ງ, ທຸກໆ ວັນຈັນແລ້ວລາຍງານໃຫ້ເຈົ້າໜ້າທີ່ຕຳຫຼວດ ປກສ ບໍລິການປະຊາຊົນເພື່ອລາຍງານໃຫ້ ປກສ ເມືອງ ແລະ ປກສ ແຂວງ.

ໃນກໍລະນີບຸກຄົນ, ນິຕິບຸກຄົນ ຫຼື ອົງການຈັດຕັ້ງ ເຂົ້າພັກເຊົາ ຫາກບໍ່ມີເອກະສານຢັ້ງຢືນ ຫຼື ມີການພົວພັນການເຄື່ອນໄຫວບໍ່ຖືກຕ້ອງ ເຈົ້າຂອງກິດຈະການຕ້ອງຮີບຮ້ອນລາຍງານ ຕໍ່ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ ຫຼື ປກສ ເມືອງ ຢ່າງທັນການ.

5.2. ຮ້ານອາຫານກິນດື່ມ, ບັນເທີງ-ຄາຣາໂອເກະ.

- ເຈົ້າຂອງກິດຈະການຮ້ານອາຫານກິນດື່ມ, ບັນເທີງ-ຄາຣາໂອເກະ ຕ້ອງເປັນເຈົ້າການ ບໍລິການຄວາມເບີກບານມ່ວນຊື່ນໃຫ້ມີລັກສະນະຊາດ, ຖືກຕ້ອງຕາມຮີດຄອງປະເພນີວັດທະນະທໍາລາວບັນດາເຜົ່າ ແລະ ເປັນເຈົ້າການປົກປັກຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມຢູ່ພາຍໃນຂອບເຂດຄວາມຮັບຜິດຊອບຂອງຕົນ.

- ຕ້ອງເອົາໃຈໃສ່ເຂັ້ມງວດປະຕິບັດໂມງເວລາປິດ ບໍລິການແຂກໃນແຕ່ລະວັນບໍ່ໃຫ້ກາຍເວລາ 23 ໂມງ 30 ນາທີ, ຮອດ 24 ໂມງ 00 ນາທີ ແມ່ນໃຫ້ອັດສະຖານທີ່ຢ່າງຮຽບຮ້ອຍ.

- ຕ້ອງມີຄວາມຮັບປະກັນ ດ້ານສະຖານທີ່ຈອດລົດຂອງແຂກທີ່ມາບໍລິການ, ຕ້ອງມີພະນັກງານຈັດສັນ, ຮັກສາປ້ອງກັນເວນຍາມຈັດສັນສະຖານທີ່ ຢ່າງເຂັ້ມງວດ.

- ໃນກໍລະນີ ຫາກເຈົ້າຂອງກິດຈະການ ມີຈຸດປະສົງຢາກເປີດບໍລິການ ເກີນໂມງເວລາທີ່ທາງການກໍານົດໃນໄລຍະຊົ່ວຄາວ ເຊັ່ນ: ຈັດງານບຸນປະເພນີ, ຈັດງານລ້ຽງ, ສະເຫຼີມສະຫຼອງ ວັນສໍາຄັນຕ່າງໆ ຂອງພັກ, ຂອງຊາດ ຕ້ອງໄດ້ນໍາສະເໜີຂໍອະນຸຍາດຜ່ານເຈົ້າໜ້າທີ່ພາກສ່ວນທີ່ກ່ຽວຂ້ອງ.

5.3. ຮ້ານອາບ-ອົບ-ນວດ, ສັນຍາກໍາແປງເພດຕ່າງໆ.

- ບຸກຄົນທີ່ມາໃຊ້ບໍລິການ ອາບ-ອົບ-ນວດ, ສັນຍາກໍາແປງເພດຕ່າງໆ ເປັນຕົ້ນ: ເສີມດັງ, ເສີມຄາງ, ເສີມຄິ້ວ, ດັດແຂ້ວ, ເສີມ ຫຼື ລົບຈຸດຕ່າງໆ ຂອງໃບໜ້າ ແລະ ອື່ນໆ ເຈົ້າຂອງກິດຈະການຕ້ອງໄດ້ສ້າງປຶ້ມບັນທຶກປະຫວັດ, ຊື່-ນາມສະກຸນ, ສໍາເນົາສໍາມະໂນຄົວ ຫຼື ບັດປະຈໍາຕົວ ແລະ ເອກະສານຢັ້ງຢືນອື່ນໆ ເພື່ອລາຍງານໃຫ້ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ ຫຼື ປກສ ເມືອງ ຮັບຊາບ.

ຕໍ່ບຸກຄົນທີ່ເຂົ້າມາບໍລິການເສີມ ຫຼື ລົບຈຸດຕ່າງໆ ຂອງໃບໜ້າ ເປັນຕົ້ນ: ເສີມດັງ, ເສີມຄາງ, ເສີມຄິ້ວ, ດັດແຂ້ວ ແລະ ຈຸດຕໍານິຂອງໃບໜ້າ ຕ້ອງໃຫ້ເຈົ້າຂອງຜູ້ປະກອບການອອກໃບຢັ້ງຢືນເປັນລາຍລັກອັກສອນ ຢ່າງຖືກຕ້ອງ.

5.4. ຮ້ານສ່ຽນ ແລະ ສ້ອມແປງກະແຈທຸກປະເພດ.

- ເຈົ້າຂອງກິດຈະການຮ້ານສ່ຽນກະແຈ ຕ້ອງໄດ້ແຈ້ງເຄື່ອງມືຮັບໃຊ້ທຸກຊະນິດ ນັບແຕ່ເຄື່ອງຈັກທໍາການຜະລິດໃຫ້ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ ຫຼື ປກສ ເມືອງ ບ່ອນກິດຈະການ ຫຼື ທຸລະກິດຂອງຕົນຕັ້ງຢູ່.

- ບຸກຄົນ ຫຼື ນິຕິບຸກຄົນ ມີຄວາມຕ້ອງການຢາກສ່ຽນລູກກະແຈ ທຸກຊະນິດ ເຈົ້າຂອງກິດຈະການ ຕ້ອງໄດ້ສ້າງປຶ້ມບັນທຶກປະຫວັດ, ຊື່-ນາມສະກຸນ ແລະ ສໍາເນົາສໍາມະໂນຄົວ ຫຼື ບັດປະຈໍາຕົວ ມາຢັ້ງຢືນ ຈຶ່ງສາມາດສ່ຽນ ຫຼື ສ້ອມແປງໃຫ້ໄດ້ ແຕ່ຕ້ອງໄດ້ສະຫຼຸບລາຍງານ ໜຶ່ງອາທິດ-ຕໍ່ຄັ້ງ ໃຫ້ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ ຫຼື ປກສ ເມືອງ ຮັບຊາບ.

5.5. ໂຮງຮັບຈໍານໍາ - ຊວດຈໍາ.

- ບຸກຄົນ ຫຼື ນິຕິບຸກຄົນ ຢາກເອົາວັດຖຸສິ່ງຂອງມາຮັບຈໍານໍາ - ຊວດຈໍາ ເຈົ້າຂອງກິດຈະການຕ້ອງໄດ້ສ້າງປຶ້ມບັນທຶກປະຫວັດ, ຊື່-ນາມສະກຸນ ແລະ ສໍາເນົາປຶ້ມສໍາມະໂນຄົວ ຫຼື ບັດປະຈໍາຕົວ ຂອງຜູ້ມາບໍລິການຢ່າງລະອຽດຈະແຈ້ງ.

- ໃນກໍລະນີສົງໃສວັດຖຸທີ່ມີການພົວພັນເຖິງການກະທໍາຜິດແມ່ນໃຫ້ລາຍງານເຈົ້າໜ້າທີ່ຕໍາຫຼວດຢ່າງຮີບດ່ວນ.

5.6. ຮ້ານສ້ອມແປງພາຫະນະ (ດັດແປງພາຫະນະ).

- ບຸກຄົນ, ນິຕິບຸກຄົນ ມີຄວາມຕ້ອງການຢາກດັດແປງສະພາບເຕັກນິກຂອງພາຫະນະ ເຊັ່ນ: ປ່ຽນຈັກ, ປ່ຽນໂຄງຮ່າງພາຫະນະ, ເຄາະ-ພົ່ນປ່ຽນສີລົດທຸກຄັ້ງ ຕ້ອງໄດ້ປະກອບເອກະສານນໍາສະເໜີພາກສ່ວນກ່ຽວຂ້ອງ ອະນຸຍາດສາກ່ອນ ເຈົ້າຂອງກິດຈະການຈຶ່ງສາມາດສ້ອມແປງໃຫ້ໄດ້ ແຕ່ຕ້ອງໄດ້ບັນທຶກປະຫວັດ ຊື່ ແລະ ນາມສະກຸນ ເຈົ້າຂອງພາຫະນະ, ເອກະສານຢັ້ງຢືນພາຫະນະ ທີ່ຖືກດັດແປງຢ່າງລະອຽດ ແລ້ວລາຍງານໃຫ້ເຈົ້າໜ້າທີ່ ປກສ ບໍລິການປະຊາຊົນ ບ່ອນທີ່ຮ້ານສ້ອມແປງພາຫະນະຕັ້ງຢູ່ ຮັບຊາບ.

ກໍລະນີ ສົງໃສພາຫະນະທີ່ນໍາເຂົ້າມາດັດແປງບໍ່ຈະແຈ້ງ ທີ່ມີການພົວພັນການກະທໍາຜິດລະບຽບກົດໝາຍ ຕ້ອງ

ໄດ້ລາຍງານໃຫ້ເຈົ້າໜ້າທີ່ຕຳຫຼວດ ຢ່າງຮີບດ່ວນ.

5.7. ກາປະທັບ.

- ສຳລັບການຜະລິດກາປະທັບໃນປະຈຸບັນ ແມ່ນບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງໃດດຳເນີນການຜະລິດກາປະທັບ, ມີແຕ່ກະຊວງປ້ອງກັນຄວາມສະຫງົບເທົ່ານັ້ນມີສິດຄວັດກາປະທັບທຸກຊະນິດ, ສ່ວນທ້ອງຖິ່ນແມ່ນມີໜ້າທີ່ດຳເນີນການຄຸ້ມຄອງ-ກວດກາ.

- ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ພາຍຫຼັງທີ່ໄດ້ຮັບກາປະທັບ ຈາກກະຊວງປ້ອງກັນຄວາມສະຫງົບມາແລ້ວຕ້ອງໄດ້ມາແຈ້ງຜ່ານ ເພື່ອຂໍອະນຸຍາດນຳໃຊ້ກາປະທັບຂອງຕົນ ຈາກເຈົ້າໜ້າທີ່ ປກສ ແຂວງ ຖ້າພາກສ່ວນໃດຫາກນຳໃຊ້ກາປະທັບຂອງຕົນ ໂດຍທີ່ບໍ່ໄດ້ມາແຈ້ງຕໍ່ເຈົ້າໜ້າທີ່ ແມ່ນຖືວ່ານຳໃຊ້ບໍ່ຖືກຕ້ອງ.

- ກໍລະນີຫາກກາປະທັບ ຂອງອົງການຈັດຕັ້ງ ຫຼື ຫົວໜ່ວຍທຸລະກິດໃດໜຶ່ງ ຕົກເຮ່ຍເສຍຫາຍ, ຕົວໜັງສືລຶບ, ຕົວໜັງສືບໍ່ແຈ້ງ, ກາປະທັບເປິເປື້ອນ ຕ້ອງແຈ້ງຕໍ່ເຈົ້າໜ້າທີ່ ປກສ ແຂວງ ເພື່ອຢັ້ງຢືນການເສຍຫາຍ ຫຼື ປ່ຽນກາໃໝ່, ບໍ່ອະນຸຍາດໃຫ້ນຳໃຊ້ກາປະທັບທີ່ບໍ່ແຈ້ງ ຫຼື ປອມແປງກາປະທັບຢ່າງເດັດຂາດ.

5.8. ອາວຸດ, ລູກກະສຸນ, ປືນທຸກຊະນິດ ແລະ ເຄື່ອງມືຊ່ວຍໜູນ.

- ອາວຸດ, ລູກກະສຸນ, ທາດລະເບີດ ຂອງກຳລັງປະກອບອາວຸດ ທະຫານ, ກອງຫຼອນ ແມ່ນກອງບັນຊາການທະຫານ ແຂວງ ເປັນຜູ້ຮັບຜິດຊອບກວດກາ, ຄຸ້ມຄອງ.

- ອາວຸດ, ລູກກະສຸນ, ທາດລະເບີດ ຂອງກຳລັງປ້ອງກັນຄວາມສະຫງົບ, ພະນັກງານສັງກັດລັດ, ນັກທຸລະກິດແມ່ນມອບໃຫ້ກອງບັນຊາການ ປກສ ແຂວງ ເປັນຜູ້ຮັບຜິດຊອບກວດກາ, ຄຸ້ມຄອງ ແລະ ອອກໃບອະນຸຍາດນຳໃຊ້ອາວຸດທຸກຊະນິດ ຢ່າງຖືກຕ້ອງ ຕາມລະບຽບຫຼັກການ.

- ສ່ວນປືນກິລາ, ປືນຮັບໃຊ້ຝຶກຊ້ອມ, ແຂ່ງຂັນກິລາແມ່ນມອບໃຫ້ສະຫະພັນກິລາຍິງປືນແຂວງ ເປັນຜູ້ຮັບຜິດຊອບ ຄຸ້ມຄອງນຳໃຊ້ ແຕ່ຕ້ອງແຈ້ງບັນຊີຈຳນວນປືນ, ຊະນິດປືນ, ຈຳນວນລູກກະສຸນ ແລະ ຕ້ອງມາຂຶ້ນທະບຽນອະນຸຍາດນຳໃຊ້ ຈາກກອງບັນຊາການ ປກສ ແຂວງ ເພື່ອຄຸ້ມຄອງ, ກວດກາ ໃຫ້ຖືກຕ້ອງຕາມລະບຽບຫຼັກການ.

5.9. ທາດລະເບີດ-ທາດແຕກ, ວັດຖຸເຄມີ, ສານພິດຕ່າງໆ.

ບຸກຄົນ ຫຼື ນິຕິບຸກຄົນ ແລະ ການຈັດຕັ້ງ ດຳເນີນປະກອບກິດຈະການ ຜະລິດ, ນຳເຂົ້າ-ສົ່ງອອກ, ຊື້-ຂາຍ ເປັນຕົ້ນ: ທາດລະເບີດ-ທາດແຕກ, ວັດຖຸເຄມີ, ສານພິດຕ່າງໆ ທີ່ມີຄວາມສ່ຽງຕໍ່ຄວາມສະຫງົບສຸກ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ ຕ້ອງໄດ້ແຈ້ງນຳສະເໜີຜ່ານ ກອງບັນຊາການ ປກສ ແຂວງ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເພື່ອອະນຸຍາດ ຢ່າງຖືກຕ້ອງຕາມລະບຽບ ແລະ ກົດໝາຍ.

6. ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ.

6.1. ຂໍ້ຫ້າມສຳລັບພະນັກງານ ຈົດທະບຽນອາຊີບ-ພາຫະນະພິເສດ ມີດັ່ງນີ້.

- ຫ້າມສວຍໃຊ້ໜ້າທີ່ຕຳແໜ່ງ, ໃຊ້ສິດອຳນາດເກີນຂອບເຂດ, ບັງຄັບນາບຂູ່, ຮັບ ຫຼື ທວງເອົາສິນບົນ ແລະ ປອມແປງຂໍ້ມູນຫາຜົນປະໂຫຍດຂອງຕົນ.

- ຫ້າມເປີດເຜີຍຂໍ້ມູນສ່ວນຕົວຂອງບຸກຄົນ ໂດຍບໍ່ໄດ້ຮັບອະນຸຍາດ ແລະ ກົດໜ່ວງຖ່ວງດຶງ, ຊຸກເຊື່ອງ, ທຳລາຍເອກະສານ ກ່ຽວກັບການຈົດທະບຽນອາຊີບ-ພາຫະນະພິເສດ.

- ຫ້າມມີພຶດຕິກຳອື່ນທີ່ເປັນການລະເມີດລະບຽບຫຼັກການ ແລະ ກົດໝາຍ.

- ຫ້າມເກັບຄ່າທຳນຽມການຈົດທະບຽນສູງກວ່າລັດຖະບັນຍັດ ຂອງປະທານປະເທດ ວ່າດ້ວຍຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ທີ່ໄດ້ກຳນົດໄວ້.

6.2. ຂໍ້ຫ້າມສຳລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງອື່ນໆ ມີດັ່ງນີ້:

- ຫ້າມຂັດຂວາງ ຫຼື ບໍ່ອຳນວຍຄວາມສະດວກໃນການປະຕິບັດໜ້າທີ່ ຂອງເຈົ້າໜ້າທີ່ທະບຽນອາຊີບ-ພາຫະນະພິເສດ.

- ຫ້າມປຸກສ້າງ ຫຼື ດຳເນີນກິດຈະການອາຊີບ-ພາຫະນະພິເສດ ກ່ອນໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ.

- ຫ້າມເປັນສື່ກາງໃນການໃຫ້ ແລະ ຮັບສິນບົນໃຫ້ແກ່ເຈົ້າໜ້າທີ່ທະບຽນອາຊີບ-ພາຫະນະພິເສດ.

- ຫ້າມໃຫ້ຂໍ້ມູນບໍ່ຖືກຕ້ອງ ຫຼື ສົມຮູ້ຮ່ວມຄິດ ປອມແປງເອກະສານ ກ່ຽວກັບການຈົດທະບຽນອາຊີບ-ພາຫະນະພິເສດ ທີ່ຄົນຮູ້.

- ຫ້າມບັງຄັບນາບຂູ່ ຫຼື ໃຊ້ຄວາມຮຸນແຮງຕໍ່ວະຍົວະຫຼອກລວງ ເຈົ້າໜ້າທີ່ທະບຽນອາຊີບ-ພາຫະນະພິເສດ.

- ຫ້າມເດັດຂາດບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ດຳເນີນປະກອບກິດຈະການຜະລິດ, ຊື້-ຂາຍ, ນຳເຂົ້າ-ສົ່ງອອກອາວຸດ, ປືນທຸກຊະນິດ, ທາດລະເບີດ, ທາດແຕກ, ຄອບຄອງອາວຸດ, ວັດຖຸເຄມີ, ສານພິດ ແລະ ເຄື່ອງມືຊ່ວຍໝູນປະເພດຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ຕຳຫຼວດ ແລະ ພາກສ່ວນທີ່ກ່ຽວຂ້ອງ.

- ຫ້າມນຳໃຊ້ກາປະທັບ ກ່ອນຈົດທະບຽນ ແລະ ອອກໃບອະນຸຍາດນຳໃຊ້ ໂດຍບໍ່ຖືກຕ້ອງ ຕາມລະບຽບຫຼັກການ.

- ຫ້າມຜະລິດກາປະທັບທຸກປະເພດ ໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າໜ້າທີ່ຕຳຫຼວດ, ກົມຄຸ້ມຄອງສຳມະໂນຄົວ ແລະ ກໍ່ສ້າງຮາກຖານ ກະຊວງປ້ອງກັນຄວາມສະຫງົບ.

- ຫ້າມຄົນຕ່າງປະເທດ, ຄົນບໍ່ມີສັນຊາດ ປະກອບກິດຈະການ ອາບ-ອົບ-ນວດ, ເສີມສວຍ, ສັກຢາກຳ, ເກັບຊື້ເຫຼັກເສດ, ຢາງພລາສະຕິກ ແລະ ອື່ນໆ ທີ່ມີຄວາມສ່ຽງ ຕໍ່ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ.

- ຫ້າມດັດແປງສະພາບ ເຕັກນິກລົດ, ຕິດຕັ້ງເຄື່ອງສຽງລົດດັງເກີນຂອບເຂດ ທີ່ຂະແໜງການທີ່ກ່ຽວຂ້ອງໄດ້ກຳນົດໄວ້.

- ຫ້າມສວຍໃຊ້ ການຈົດທະບຽນວຽກງານອາຊີບ-ພາຫະນະພິເສດ ເພື່ອເຄື່ອນໄຫວກໍ່ຄວາມບໍ່ສະຫງົບ ແລະ ຄວາມບໍ່ເປັນລະບຽບຮຽບຮ້ອຍຂອງສັງຄົມ ທີ່ເປັນການລະເມີດຕໍ່ລະບຽບກົດໝາຍ.

- ຫ້າມບັນດາຜູ້ປະກອບການວຽກງານອາຊີບ-ພາຫະນະພິເສດ ເປັນຕົ້ນ ແມ່ນຮ້ານອາຫານກິນດື່ມ, ບັນເທີງ-ຄາຣາໂອເກະ ແລະ ອື່ນໆ ເປີດເພງດັງ ທີ່ມີສຽງເນືອງນັນ ເກີນຂອບເຂດ ທີ່ທາງພາກສ່ວນກ່ຽວຂ້ອງໄດ້ກຳນົດໄວ້.

- ຫ້າມມີພຶດຕິກຳອື່ນ ທີ່ເປັນການລະເມີດລະບຽບການ ແລະ ກົດໝາຍ.

7. ມາດຕະການຕໍ່ຜູ້ລະເມີດ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງໃດທີ່ໄດ້ລະເມີດຄຳສັ່ງສະບັບນີ້ ທີ່ກໍ່ໃຫ້ເກີດຄວາມເສຍຫາຍໃຫ້ແກ່ລັດ, ສັງຄົມ, ບຸກຄົນອື່ນ ຕ້ອງຖືກປະຕິບັດມາດຕະການ ດ້ວຍຮູບການສຶກສາອົບຮົມ, ກ່າວເຕືອນ, ປັບໃໝຕາມແຕ່ກໍລະນີ, ໃນກໍລະນີຮ້າຍແຮງ ຈະຖືກດຳເນີນຄະດີ ຕາມລະບຽບກົດໝາຍ.

8. ການຈັດຕັ້ງປະຕິບັດ

ບັນດາພະແນກການ, ອົງການທຽບເທົ່າຂັ້ນແຂວງ, ກອງບັນຊາການ ປກຊ-ປກສ ແລະ ບັນດາເມືອງ, ອົງການປົກຄອງບ້ານໃນທົ່ວແຂວງ ເມື່ອໄດ້ຮັບຄຳສັ່ງສະບັບນີ້ແລ້ວ. ຕ້ອງເອົາໃຈໃສ່ໃນຄົ້ນຄວ້າເຊື່ອມຊຶມ ໃຫ້ມີຄວາມເຂົ້າໃຈຢ່າງເລິກເຊິ່ງ ພ້ອມທັງເປັນເຈົ້າການປະສານສົມທົບແຕ່ລະພາກສ່ວນໃນການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ແລະ ນິຕິກຳກ່ຽວຂ້ອງກັບວຽກງານຄຸ້ມຄອງອາຊີບ-ພາຫະນະພິເສດ ພາຍໃນແຂວງ ຕາມສິດ ແລະ ໜ້າທີ່ໃຜລາວຢ່າງເຂັ້ມງວດ ໂດຍມອບໃຫ້ກອງບັນຊາການ ປກສ ແຂວງ ແລະ ປກສ ເມືອງທົ່ວແຂວງເປັນໃຈກາງ ແລະ ເປັນເຈົ້າການຈັດຕັ້ງປະຕິບັດວຽກງານດັ່ງກ່າວຢ່າງມີປະສິດທິຜົນສູງ.

ຜ່ານການຈັດຕັ້ງປະຕິບັດຄຳສັ່ງສະບັບນີ້, ມີຂໍ້ສະດວກ ຫຼື ພົບຄວາມຫຍຸ້ງຍາກແນວໃດນັ້ນ ຕ້ອງມີການປະສານສົມທົບພາກສ່ວນກ່ຽວຂ້ອງ ແກ້ໄຂໃຫ້ສອດຄ່ອງຕາມສະພາບຄວາມເປັນຈິງ ແລະ ທ່ວງທັນກັບສະພາບການທີ່

ເກີດຂຶ້ນ, ພ້ອມນັ້ນ ຕ້ອງລາຍງານຂໍການຊີ້ນຳຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງຈາກຄະນະພັກ-ຄະນະນຳ ຕາມລະບົບສາຍຕັ້ງ-ສາຍຂວາງ ຕໍ່ວຽກງານດັ່ງກ່າວເພື່ອໃຫ້ທິດແກ້ໄຂໃນແຕ່ລະໄລຍະ.

9. ຄຳສັ່ງສະບັບນີ້ມີ ຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ ແລະ ພາຍຫຼັງ ສິບຫ້າວັນ ນັບແຕ່ວັນລົງໃນຈົດໝາຍເຫດທາງລັດຖະການເປັນຕົ້ນໄປ.

ຄຳສັ່ງແນະນຳ, ຂໍ້ຕົກລົງ ກ່ຽວກັບການຄຸ້ມຄອງວຽກງານອາຊີບ-ພາຫະນະພິເສດ ທີ່ອອກໃນເມື່ອກ່ອນຂັດກັບຄຳສັ່ງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ເຈົ້າແຂວງສະຫວັນນະເຂດ.**

ສັນຕິພາບ ພົມວິຫານ